# ໂຄງຮ່າງການຈັດຕັ້ງ, ສິດ ແລະ ໜ້າທີ່ ຮັບຜິດຊອບຂອງ ສະມາຊິກ CCM ສປປ ລາວ

# ການປະຖົມນິເທດພາລະບົດບາດໃຫ້ແກ່ ສະມາຊິກໃຫມ່ຂອງ CCM

20 ພະຈິກ 2025
ກອງເລຂາ CCM

# ຫຼັກການທົ່ວໄປໃນການດຳເນີນງານຂອງຄະນະກຳມະການປະສານງານກອງທຶນໂລກ (CCM) ຕາມທີ່ໄດ້ກຳນົດໄວ້ໃນພາລະບົດບາດຂອງ CCM

5.1 CCM ຖືເອົາຫຼັກການການມີສ່ວນຮ່ວມຂອງທຸກພາກສ່ວນ, ອີງໃສ່ຫຼັກການຄວາມໂປ່ງໃສ, ການຮ່ວມມື ແລະ ກິດຈະກຳທີ່ມີປະສິດທິຜົນ. CCM ຮັບປະກັນວ່າການເຄື່ອນໄຫວຈັດຕັ້ງປະຕິບັດກິດຈະກຳ ຕ້ອງຢູ່ບົນພື້ນຖານຫຼັກການການບໍລິຫານທີ່ດີ ດັ່ງຕໍ່ໄປນີ້:

5.1.1 ຄວາມມຸ່ງໝັ້ນ ແລະ ຄວາມເປັນເຈົ້າການຂອງຄົນພາຍໃນປະເທດໃນການນຳພາ ແລະ ຂັບເຄື່ອນແຜນງານດ້ວຍການມີສ່ວນຮ່ວມຂອງຫຼາຍພາກສ່ວນ ໂດຍເຄົາລົບພາລະບົດບາດຂອງລັດຖະບານ ທີ່ເປັນສູນກາງຂອງການປະສານງານໃນການຕອບໂຕ້ຕໍ່ 3 ພະຍາດ.

5.1.2 ການບໍລິຫານຄຸ້ມຄອງຄວາມຂັດແຍ່ງທາງດ້ານຜົນປະໂຫຍດ ເພື່ອຮັບປະກັນຄວາມເຊື່ອໝັ້ນຕໍ່ຄະນະກຳມະການປະສານງານກອງທຶນໂລກ, ການພິຈາລະນາທີ່ເປັນກາງ ແລະ ການຕັດສິນຢ່າງຖືກຕ້ອງຕາມລະບຽບກົດໝາຍ.

5.1.3 ຄວາມສະເໝີພາບ, ມີສິດເຕັມທີ່ໃນການສະແດງຄວາມຄິດເຫັນ ແລະ ການມີສ່ວນຮ່ວມໃນການຕັດສິນໃຈຂອງສະມາຊິກທຸກທ່ານ.

5.1.4 ຄວາມໂປ່ງໃສ ແລະ ຄວາມເຊື່ອໝັ້ນເຊິ່ງກັນ ແລະ ກັນໃນການພິຈາລະນາດ້ວຍຄວາມຮອບຄອບ, ການຕັດສິນໃຈ ແລະ ການຈັດຕັ້ງປະຕິບັດຂອງ CCM ແລະ ກອງເລຂາຂອງຕົນ.

# ໂຄງຮ່າງການຈັດຕັ້ງຂອງ CCM



# ໂຄງຮ່າງຍ່ອຍຂອງ CCM ທຽບກັບ ພາລະໜ້າທີ່ຂອງ CCM

| 5 ພາລະໜ້າທີ່ສຳຄັນຂອງ CCM | CCM ມອບໜ້າທີ່ຕົ້ນຕໍໃຫ້ຄະນະກຳມະການຍ່ອຍ ໃຫ້ມີຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ |
|---|---|
| **1. ການຈັດຕັ້ງ ແລະ ການເຮັດວຽກຂອງ CCM ແລະ ກອງເລຂາຂອງຕົນ** | ຄະນະກຳມະການບໍລິຫານງານ (ExCom)<br>ກອງເລຂາ |
| **2. ການປະສານງານກອງທຶນໂລກ ກັບ ແຫຼ່ງທຶນຂອງປະເທດອື່ນ** | ຄະນະກຳມະການຂົນຂວາຍແຫຼ່ງທຶນ (RMC)<br>ໜ່ວຍງານສະເພາະກິດຂອງ HIV, TB, Malaria ແລະ HSS<br>ກອງເລຂາ |
| **3. ການພັດທະນາບົດສະເໜີຂໍທຶນ ແລະ ການຈັດສັນທຶນໃຫ້ຜູ້ຮັບທຶນຍ່ອຍ** | ຄະນະກຳມະການຂົນຂວາຍແຫຼ່ງທຶນ (RMC)<br>ກອງເລຂາ |
| **4. ການຄຸ້ມຄອງ (ລວມເຖິງການອະນຸມັດທຶນ ແລະ ການຈັດສັນທຶນຄືນໃໝ່)** | ຄະນະນກຳມະການກວດກາ (OC)<br>ກອງເລຂາ |
| **5. ການສ້າງເອກະສານ ແລະ ການພົວພັນກັບ ບັນດາເຂດເລືອກຕັ້ງ ແລະ ກອງທຶນໂລກ** | ຄະນະກຳມະການບໍລິຫານງານ (ExCom)<br>ກອງເລຂາ |

# ຄະນະກຳມະການບໍລິຫານງານ (ExCom) - ຄວາມຮັບຜິດຊອບ

| ກອງທຶນໂລກ (GF) | CCM TOR |
|---|---|
| • ການພົວພັນໃນນາມ CCM ກັບ GFCT, ລັດຖະບານ, ML/BL, CSO, PRs, SRs<br>• ການປະສານງານ ແລະ ການຊີ້ນໍາໃຫ້ກັບ ກອງເລຂາ CCM ໃນທຸກວຽກງານ.<br>• ຊຸກຍູ້ ກອງເລຂາ CCM ໃນການຮ່າງແຜນວຽກ ແລະ ງົບປະມານຂອງ CCM ແລະ ກອງເລຂາ ເພື່ອໄດ້ຮັບການອະນຸມັດຈາກ CCM ທັງໝົດ.<br>• ສະໜັບສະໜູນກອງເລຂາ CCM ໃນການຕິດຕາມວຽກງານຂອງ CCM (EPA).<br>• ປະສານງານ ແລະ ສະໜັບສະໜູນວຽກງານຂອງທີມງານວິຊາການ ແລະ CCM ທັງໝົດ.<br>• ຮ່າງໜັງສືເຊີນເຂົ້າຮ່ວມກອງປະຊຸມ ແລະ ວາລະກອງປະຊຸມຮ່ວມກັບ ກອງເລຂາ CCM.<br>• ຮັບເອົາ ແລະ/ຫຼື ສືບສວນຂໍ້ມູນກ່ຽວກັບ COI ໃນບັນດາກິດຈະກໍາຂອງ CCM.<br>• ຕັດສິນໃຈດ້ານວຽກງານບໍລິຫານເປັນປົກກະຕິເພື່ອສະໜັບສະໜູນການເຮັດວຽກຂອງ CCM. | 18.1 ອົງປະກອບມີ: ປະທານ CCM, ຮອງປະທານ 2 ທ່ານ, ປະທານ OC, ປະທານ RMC ແລະ ຫົວໜ້າກອງເລຂາ CCM (ແຕ່ບໍ່ມີສິດລົງຄະແນນສຽງ)<br>18.2 ປະສານງານ ແລະ ຊີ້ນໍາບັນດາກິດຈະກໍາຂອງ ກອງເລຂາ, ສະໜັບສະໜູນ, ປະສານງານກັບ ບັນດາຄະນະກໍາມະການ ແລະ ໜ່ວຍງານວິຊາການ ແລະ ຍັງສາມາດພົວພັນສື່ສານໃນເຫດການຮີບດ່ວນຢ່າງຕໍ່ເນື່ອງ ໂດຍບໍ່ຈໍາເປັນຕ້ອງລວມສະມາຊິກຂອງ CCM ທັງໝົດ. |

# ຄະນະກຳມະການກວດກາ (OC) - ຄວາມຮັບຜິດຊອບ

| ກອງທຶນໂລກ (GF) | CCM TOR |
|---|---|
| • ການກວດກາຍຸດທະສາດຂອງກອບການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອ<br>• ຈັດຕັ້ງປະຕິບັດການລົງຕິດຕາມຊຸກຍູ້<br>• ກວດສອບບັນຫາສະເພາະຂອງໂຄງການ<br>• ໃຫ້ຄຳຄິດເຫັນໃນນາມ CCM ກ່ຽວກັບຜົນການຈັດຕັ້ງປະຕິບັດທຶນ<br>• ຮັບປະກັນການແກ້ໄຂບັນຫາຕ່າງໆໃນການຈັດຕັ້ງປະຕິບັດທຶນ<br>• ມີສ່ວນຮ່ວມກັບ PR ໃນການວາງແຜນ ແລະ ການປະຕິບັດການສະຫຼຸບການນຳໃຊ້ທຶນ<br>• ສ້າງແຜນວິທີການຄຸ້ມຄອງຄວາມສ່ຽງ | 22.8.1 ສ້າງຂີດຄວາມສາມາດ ແລະ ກະກຽມແຜນການປະຈຳປີຂອງການຕິດຕາມກວດກາ ຂອງ CCM<br>22.8.2 ຮອບຮວມຂໍ້ມູນກ່ຽວກັບໂຄງການ ແລະ ການຈັດຕັ້ງປະຕິບັດທຶນໂຄງການ<br>22.8.3 ກຳນົດບັນຫາ ແລະ ຂໍ້ບົກຜ່ອງໃນການຈັດຕັ້ງປະຕິບັດວຽກງານຕ່າງໆ<br>22.8.4 ໃຫ້ທິດທາງ ແລະ ຄຳແນະນຳ ເພື່ອຊ່ວຍການຕັດສິນໃຈຂອງ CCM ແລະ ແຜນການປະຕິບັດຄັ້ງຕໍ່ໄປ<br>22.8.5 ຕິດຕາມ ແລະ ລາຍງານຜົນໄດ້ຮັບຕໍ່ CCM ແລະ ພາກສ່ວນຂອງໂຄງການທີ່ກ່ຽວຂ້ອງ |

# ຄະນະກຳມະການຂົນຂວາຍແຫຼ່ງທຶນ (RMC) - ຄວາມຮັບຜິດຊອບ

## ອົງປະກອບ

21.5.1 ມີສະມາຊິກຈຳນວນ 10 ທ່ານ ທີ່ໄດ້ຖືກຄັດເລືອກໂດຍ CCM ລວມມີ ສະມາຊິກ CCM 6 ທ່ານ (ສະມາຊິກສົມບູນ/ສຳຮອງ) ແລະ ບໍ່ແມ່ນສະມາຊິກ CCM 4 ທ່ານ.

## ຄວາມຮັບຜິດຊອບສະເພາະ

21.8.1 ການພັດທະນາບົດສະເໜີຂໍທຶນ

21.8.2 ການສົ່ງເສີມ

21.8.3 ບັນດາກິດຈະກຳອື່ນໆ ທີ່ກ່ຽວຂ້ອງກັບການລະດົມທຶນ

21.8.4 ການກະກຽມແຜນວຽກ ແລະ ງົບປະມານຂອງ CCM ຮ່ວມກັບ ກອງເລຂາ CCM

# ກອງເລຂາ CCM – ບົດບາດ ແລະ ຄວາມຮັບຜິດຊອບ

| ກອງທຶນໂລກ (GF) | CCM TOR |
| --- | --- |
| **ການຄຸ້ມຄອງຄວາມຮູ້ຄວາມສາມາດຂອງ CCM:**<br>• ການລວບລວມ ແລະ ສະຫຼຸບບົດລາຍງານ (ເຊັ່ນ: PUDRs ແລະ ກະດານຂ່າວ, ຖ້າມີ)<br>• ຊ່ວຍຄະນະກຳມະການກວດກາ (OC) ເພື່ອຊອກຫາຄວາມກະຈ່າງແຈ້ງຈາກ PRs ກ່ຽວກັບບັນຫາທີ່ເກີດຂຶ້ນຈາກບົດລາຍງານຂອງ PR<br>• ການຈັດສັນ ແລະ ການກະກຽມກອງປະຊຸມ<br>• ກະກຽມບົດບັນທຶກຂອງກອງປະຊຸມ ຫຼື ບົດລາຍງານຂອງຄະນະກຳມະການອື່ນໆ<br>• ການຊ່ວຍເຫຼືອດ້ານການເດີນທາງສຳລັບການໄປຢ້ຽມຢາມບັນດາມສະຖານທີ່ ແລະ ພາກສະໜາມ<br>• ການພົວພັນວຽກງານກັບ PRs ແລະ SRs | 19.1 ການສະໜັບສະໜູນດ້ານການຈັດສິ່ງ ແລະ ການດຳເນີນງານການບໍລິຫານຂອງ CCM ແລະ ຄະນະກຳມະການຕ່າງໆ.<br>• ບັນທຶກກອງປະຊຸມ<br>• ການຮັກສາເອກະສານຂອງ CCM<br>• ດຳເນີນການແປເອກະສານທີ່ສຳຄັນ ແລະ ການແປປາກເປົ່າໃນກອງປະຊຸມ CCM<br>• ການເກັບກຳ ແລະ ເຜີຍແຜ່ຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບກິດຈະກຳຂອງກອງທຶນໂລກ, CCM ແລະ ຄະນະກຳມະການຍ່ອຍ, PRs ແລະ SRs, ເຊັ່ນດຽວກັນກັບພາກສ່ວນອື່ນໆ ທີ່ກ່ຽວຂ້ອງກັບວຽກງານຕ້ານ HIV/AIDS, TB ແລະ ມາລາເຣຍ. |

# ຄະນະສະເພາະກິດ (Task Force) – HIV

## ຈຸດປະສົງຫຼັກຂອງຄະນະສະເພາະກິດຂອງ HIV (HIV-TF)

23.1.1.1 ຊ່ວຍໃຫ້ ກະຊວງສາທາລະນະສຸກ ບັນລຸເປົ້າໝາຍທີ່ໄດ້ວາງໄວ້ໃນແຜນຍຸດທະສາດ ແລະ ແຜນການດຳເນີນງານແຫ່ງຊາດກ່ຽວກັບພະຍາດເອດ ແລະ ຮັບປະກັນການປະຕິບັດໂຄງການ HIV/AIDS ແລະ STI ແຫ່ງຊາດຢ່າງເປັນລະບົບ ແລະ ມີປະສິດທິຜົນ.

## ຄວາມຮັບຜິດຊອບສະເພາະຕໍ່ CCM

23.1.4.7 ໃຫ້ຄຳຄິດເຫັນ ແລະ ຂໍ້ສະເໜີກ່ຽວກັບເອກະສານ, ການສະເໜີ, ຂໍ້ມູນທີ່ຈະສົ່ງໃຫ້ OC/CCM ພິຈາລະນາ.

# ຄະນະສະເພາະກິດ (Task Force) - TB

## ຈຸດປະສົງຫຼັກ

23.3.1.1 ຊ່ວຍໃຫ້ກະຊວງສາທາລະນະສຸກ ບັນລຸຕາມເປົ້າໝາຍທີ່ວາງໄວ້ໃນຍຸດທະສາດວັນນະໂລກ ລະດັບໂລກ ແລະ ຍຸດທະສາດວັນນະໂລກແຫ່ງຊາດ ເພື່ອເຂົ້າເຖິງການບໍລິການຂອງ ພະຍາດວັນນະໂລກຢ່າງທົ່ວເຖິງ ເພື່ອຫຼຸດຜ່ອນຄວາມທຸກທໍລະມານ ແລະ ການເສຍຊີວິດ ຍ້ອນວັນນະໂລກໃຫ້ແກ່ປະຊາຊົນທັງໝົດ.

## ຄວາມຮັບຜິດຊອບສະເພາະຕໍ່ CCM

23.3.4.8 ໃຫ້ຄຳຄິດເຫັນ ແລະ ຂໍ້ສະເໜີກ່ຽວກັບເອກະສານ, ການສະເໜີ, ຂໍ້ມູນທີ່ຈະສົ່ງໃຫ້ OC/CCM ພິຈາລະນາ.

## ຄະນະສະເພາະກິດ (Task Force) - Malaria

### ຈຸດປະສົງຫຼັກ

23.2.1.1 ເພີ່ມທະວີການປະສານງານຄວາມພະຍາຍາມ ແລະ ຮັບປະກັນລະບົບການວາງແຜນ ແລະ ຄວາມພະຍາຍາມໃນການປະຕິບັດການຄວບຄຸມ ແລະ ລົບລ້າງພະຍາດໄຂ້ຍຸງພາຍໃນປະເທດໃຫ້ສອດຄ່ອງກັບແຜນຍຸດທະສາດຂອງລັດຖະບານທີ່ມີຢູ່. ໂດຍສະເພາະ, ຈຸດປະສົງຂອງ M-TF ແມ່ນເພື່ອເສີມສ້າງການຄຸ້ມຄອງໂຄງການຄວບຄຸມພະຍາດໄຂ້ຍຸງເພື່ອເສີມຂະຫຍາຍການເຊື່ອມສານ, ການປະສານງານຂອງຄູ່ຮ່ວມງານ ແລະ ການແບ່ງພື້ນທີ່ຂອງການຄຸ້ມຄອງ.

### ຄວາມຮັບຜິດຊອບສະເພາະຕໍ່ CCM

23.2.4.9 ສະໜັບສະໜູນ, ພັດທະນາ ແລະ/ຫຼື ໃຫ້ຄໍາຄິດເຫັນ ແລະ ຂໍ້ສະເໜີກ່ຽວກັບເອກະສານທີ່ຈະສົ່ງໃຫ້ OC/CCM ກ່ຽວກັບໂຄງການທີ່ກ່ຽວຂ້ອງກັບພະຍາດ Malaria.

## ຄະນະສະເພາະກິດ (Task Force)– HSS
## ຄວາມຮັບຜິດຊອບຕໍ່ CCM

### ຈຸດປະສົງຫຼັກ

23.4.2.1 ກະກຽມບົດສະເໜີ ຂໍທຶນການເສີມສ້າງຄວາມເຂັ້ມແຂງດ້ານລະບົບສາລະນະສຸກ (HSS) ໂດຍຜ່ານ ຄະນະກຳມະການປະສານງານກອງທຶນໂລກ (CCM) ໃຫ້ກັບກອງທຶນໂລກ ແລະ ຄຸ້ມຄອງທຶນຊ່ວຍເຫຼືອທີ່ສະໜັບສະໜູນການຄຸ້ມຄອງກິດຈະກຳທີ່ສຳຄັນ, ບຸກຄະລາກອນດ້ານສາທາລະນະສຸກ ແລະ ລະບົບຂໍ້ມູນຂ່າວສານດ້ານສາທາລະນະສຸກຂອງ ສປປ ລາວ.

# ພາລະບົດບາດຂອງ CCM:
# ສິດ ແລະ ໜ້າທີ່ຮັບຜິດຊອບຂອງສະມາຊິກ CCM

| ສິດ | ຄວາມຮັບຜິດຊອບ |
|---|---|
| 8.1 ເລືອກຕັ້ງພະນັກງານ: ປະທານ ແລະ ຮອງປະທານ 2 ທ່ານ, ເພື່ອດຳລົງຕຳແໜ່ງດັ່ງກ່າວຕາມກົດລະບຽບຂອງ TOR ນີ້.<br><br>8.2 ລົງຄະແນນສຽງໃນທຸກກິດຈະກຳທີ່ມີການລົງຄະແນນສຽງ, ຍົກເວັ້ນກິດຈະກຳທີ່ສະມາຊິກ CCM ມີ COI.<br><br>8.3 ເຂົ້າຮ່ວມທຸກກອງປະຊຸມປຶກສາຫາລື ແລະ ກິດຈະກຳທັງຫມົດຂອງ CCM, ຍົກເວັ້ນກິດຈະກຳທີ່ສະມາຊິກ CCM ມີ COI<br><br>8.4 ເຂົ້າຮ່ວມໃນການພັດທະນາບົດສະເໜີຂໍທຶ<br><br>8.5 ກວດກາກ່ຽວກັບການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອທີ່ໄດ້ຮັບ. | 9.1 ເຂົ້າຮ່ວມຢ່າງຫ້າວຫັນໃນກອງປະຊຸມ CCM ຕາມເວລາທີ່ກຳນົດ ແລະ ມີຄວາມຮັບຜິດຊອບ ຫຼື ຖ້າບໍ່ສະດວກ ແມ່ນໃຫ້ ສົ່ງສະມາຊິກສຳຮອງເຂົ້າຮ່ວມແທນ.<br><br>9.2 ເຂົ້າຮ່ວມຕາມໜ້າທີ່ຂອງ CCM.<br><br>9.3 ຖຸ້ມເຄີຍກັບນະໂຍບາຍ ແລະ ຂັ້ນຕອນ COI, ປະກອບເອກະສານ COI ປະຈຳປີ (ສະມາຊິກໃຫມ່ຕ້ອງສຳເລັດ COI ກ່ອນຈະເຂົ້າເປັນສະມາຊິກ CCM), ແລະ ໃຫ້ແຈ້ງກໍລະນີມີ COI ເພື່ອຈະຖອນຕົວອອກຈາກການພິຈາລະນາ ແລະ ການຕັດສິນໃຈ.<br><br>9.4 ປຶກສາຫາລືຢ່າງເປັນປົກກະຕິກັບອົງການຈັດຕັ້ງ ແລະ ກັບບຸກຄົນພາຍໃນການຈັດຕັ້ງທີ່ເປັນຕົວແທນເພື່ອເກັບກຳ ແລະ ສະເໜີຄຳຄິດເຫັນ ແລະ ບັນຫາທີ່ກ່ຽວຂ້ອງຢ່າງຈະແຈ້ງ ແລະ ຊັດເຈນຢູ່ໃນກອງປະຊຸມ CCM |

# ພາລະບົດບາດຂອງ CCM:
# ສິດ ແລະ ໜ້າທີ່ຮັບຜິດຊອບຂອງສະມາຊິກ CCM

| ສິດ | ຄວາມຮັບຜິດຊອບ |
|---|---|
| 8.6 ເຂົ້າຮ່ວມໃນການເລືອກເອົາຜູ້ຮັບທຶນຫຼັກ.<br><br>8.7 ສະເໜີຄຳຖາມ ແລະ ບັນຫາສຳລັບວາລະແຜນວຽກຂອງ CCM.<br><br>8.8 ໄດ້ຮັບຂໍ້ມູນຢ່າງເຕັມສ່ວນກ່ຽວກັບການຈັດຕັ້ງປະຕິບັດທຶນທີ່ໄດ້ຮັບ ແລະ ບໍລິຫານຄຸ້ມຄອງກອງເລຂາ.<br><br>8.9 ໄດ້ຮັບແຈ້ງການລ່ວງຫນ້າທັນເວລາ ແລະ ເອກະສານສຳລັບກອງປະຊຸມ CCM ທັງຫມົດ ແລະ ມະຕິຂອງກອງປະຊຸມ.<br><br>8.10 ໃນກໍລະນີທີ່ສະມາຊິກບໍ່ສາມາດເຂົ້າຮ່ວມໄດ້, ຕົວແທນສະມາຊິກຈະເປັນຜູ້ເຂົ້າຮ່ວມແທນ. | 9.5 ແລກປ່ຽນກັບສະມາຊິກ CCM ກ່ຽວກັບປະສົບການ ແລະ ຂໍ້ມູນຂ່າວສານໃຫ້ແກ່ການຈັດຕັ້ງທີ່ເປັນຕົວແທນ.<br><br>9.6 ລາຍງານ ແລະ ແຈ້ງໃຫ້ການຈັດຕັ້ງທີ່ຕົນເປັນຕົວແທນຮູ້ກ່ຽວກັບການຕັດສິນຂອງ CCM ຊຶ່ງຈະຕ້ອງໄດ້ປະຕິບັດ ແລະ ຈະຕ້ອງໄດ້ເຄົາລົບ<br><br>9.7 ເຂົ້າຮ່ວມຢ່າງຫ້າວຫັນໃນກິດຈະກຳຂອງໜ່ວຍງານ ແລະ ຄະນະກຳມະການຍ່ອຍຕ່າງໆ ທີ່ໄດ້ສ້າງຂຶ້ນໂດຍ CCM.<br><br>9.8 ຮ່ວມມືກັບກອງເລຂາ CCM.<br><br>9.9 ເຄົາລົບພາລະບົດບາດເຫຼົ່ານີ້. |

# ຂອບໃຈເດີ້